# ຫຼັກເຈັດຫຼັກໃຈ

ປະພັນໂດຍ: ທນູ ນິຣາວັນ

ຈາກມາແສນນານ ຍັງເຝົ້າຝັນຫວນຄືນອະດີດ
ຄັ້ງກ່ອນຄາວເປັນນິສິດ ນັກສຶກສາຄຣູສະຖາບັນ
ຫຼັກເຈັດຫຼັກໃຈ ເຖິງຈາກໄກໃຈຍັງລຳພັນ
ບໍ່ເຄີຍລືມສະຖາບັນ ສຶກສາວິທຍາລັຍຄຣູ

ບຸນຄຸນມາກມາຍ ເກີນກວ່າບັລຍາຍອອກມາ
ບ່ອນໄດ້ຮ່ຳຮຽນສຶກສາ ຄົ້ນຄວ້າວິຊາຄວາມຮູ້
ຄຣູບາອາຈານ ໄດ້ສັ່ງສອນເສີມສິ່ງສ້າງຄຣູ
ບຸນຄຸນຈາຣຶກຝັງຢູ່ ເຊີດຊູເທີດທູນບູຊາ

ຫຼັກເຈັດ ເຈົ້າເອີຍ ບ່ອນເຄີຍພັກພິງອາສັຍ
ທໍພັກນັກຮຽນຍິງຊາຍ ຫຼໍ່ຫຼອມສ້າງຄຣູຂອງປະຊາ
ທຳມະຊາດງົດງາມ ມີຕຶບທາມປ່າດົງງາມຕາ
ເຫມືອນດັ່ງເທພໄທ້ສ້າງມາ ລືຊາທົ່ວແຂວງສວັນ

ຫຼັກເຈັດແຫ່ງນີ້ ຝັງຮີດີບໍ່ເຄີຍລືມໄລ
ເຖິງແມ່ນຈາກມາແດນໄກ ຫົວໃຈຍັງຄິດເຖິງກັນ
ຄິດເຖິງເພື່ອນມິດ ນິສິດຮ່ວມສະຖາບັນ
ເຖິງແມ່ນຈາກໄກແສນນານ ບໍ່ມີວັນຈະລືມເຈົ້າເລີຍ